# ຫຼັກການພິຈາລະນາຂອງຄະນະກໍາມະການພິຈາລະນາ ຜົນງານທາງວິຊາການ ແລະ ແບບປະເມີນຜົນຕ່າງໆ

## I. ຫຼັກການພິຈາລະນາຂອງຄະນະກໍາມະການພິຈາລະນາ ຜົນງານທາງວິຊາການ.

- ວິທີການພິຈາລະນາຜົນງານທາງວິຊາການ ໃນການຂໍຕໍາແໜ່ງທາງວິຊາການຄູ, ຜູ້ຊ່ວຍອາຈານ, ອາຈານ, ຮອງສາດສະດາຈານ ແລະ ສາດສະດາຈານ ມີດັ່ງນີ້:

**1. ຜົນງານວິຊາການທີ່ນໍາສະເໜີ**

1.1 ຕໍາແໜ່ງຜູ້ຊ່ວຍອາຈານ: ໄດ້ແກ່

1. ມີປະຫວັດການຮຽນດີ
2. ຄົ້ນຄ້ວາ, ຮຽບຮຽງ ຫຼື ຮີບໂຮມເອກະສານວິທະຍາສາດຮັບໃຊ້ການສິດສອນ
3. ໄດ້ຮັບການຢັ້ງຢືນເຂົ້າຮ່ວມການຄົ້ນຄ້ວາວິທະຍາສາດ ຫຼື ສໍາມະນາ

1.2 ຕໍາແໜ່ງອາຈານ: ໄດ້ແກ່

1. ເອກະສານປະກອບການສອນ
2. ເອກະສານບັນລະຍາຍການສອນ
3. ການແຕ່ງ, ຮຽບຮຽງ ແປຕໍາລາ ຫຼື ຂຽນບົດຄວາມທາງວິຊາການ
4. ຜົນງານທາງວິຊາການໃນລັກສະນະອື່ນໆທີ່ມີຄຸນຄ່າທຽບໄດ້ກັບຂໍ້ 3

1.3 ຕໍາແໜ່ງຮອງສາດສະດາຈານ: ໄດ້ແກ່

1. ເອກະສານປະກອບການສອນ
2. ເອກະສານບັນລະຍາຍການສອນ
3. ການແຕ່ງ, ຮຽບຮຽງ ແປຕໍາລາ ຫຼື ຂຽນບົດຄວາມທາງວິຊາການ
4. ບົດຄົ້ນຄ້ວາວິທະຍາສາດ
5. ຜົນງານທາງວິຊາການໃນລັກສະນະອື່ນໆທີ່ມີຄຸນຄ່າທຽບໄດ້ກັບຂໍ້ 3 ແລະ 4

1.4 ຕໍາແໜ່ງສາດສະດາຈານ: ໄດ້ແກ່

1. ການແຕ່ງ, ຮຽບຮຽງ ແປຕໍາລາ ຫຼື ຂຽນບົດຄວາມທາງວິຊາການ
2. ບົດຄົ້ນຄ້ວາວິທະຍາສາດ
3. ຜົນງານທາງວິຊາການໃນລັກສະນະອື່ນໆທີ່ມີຄຸນຄ່າທຽບໄດ້ກັບຂໍ້ 1 ແລະ 2

❖ ໃຫ້ຜູ້ສະເໜີຂໍຕໍາແໜ່ງທາງວິຊາການຄັດເລືອກເອົາຜົນງານທາງວິຊາການທີ່ມີຄຸນະພາບດີຈໍານວນ 1-2 ເຫຼັ້ມ ສະເໜີໃຫ້ຫົວໜ້າພາກວິຊາ

**2. ຫຼັກການພິຈາລະນາໃຫ້ຄະແນນ:**

2.1 ຕໍາແໜ່ງຜູ້ຊ່ວຍອາຈານ: ການພິຈາລະນາຜ່ານທີ່ຄະແນນ 30 ຄະແນນ

1. ຜົນການຮຽນໃນແຕ່ລະວິຊາ ຕ້ອງຢູ່ໃນລະດັບດີ 7-8 (10-14 ຄະແນນ)
2. ການຄົ້ນຄ້ວາ, ການຮຽບຮຽງ ຫຼື ຮີບໂຮມເອກະສານຮັບໃຊ້ການສອນຢູ່ໃນລະດັບ 10-14 ຄະແນນ
3. ໃບຢັ້ງຢືນການເຂົ້າຮ່ວມຝຶກອົບຮົມ ຫຼື ສຳມະນາ 10 ຄະແນນຕໍ່ໃບ

2.2 ຕຳແໜ່ງອາຈານ: ການພິຈາລະນາຜ່ານທີ່ຄະແນນ 40 ຄະແນນ

1. ເອກະສານປະກອບການສອນ ຕ້ອງຢູ່ໃນລະດັບດີ 10-14 ຄະແນນ
2. ເອກະສານຄຳບັນລະຍາຍການສອນ ຕ້ອງຢູ່ໃນລະດັບດີ 10-14 ຄະແນນ
3. ການແຕ່ງ, ຮຽບຮຽງ ແປຕຳລາ ຫຼື ຂຽນບົດຄວາມທາງວິຊາການ ຕ້ອງຢູ່ໃນລະດັບດີ 20-29 ຄະແນນ
4. ຜົນງານທາງວິຊາການໃນລັກສະນະອື່ນໆທີ່ມີຄຸນຄ່າທຽບໄດ້ກັບຂໍ້ 3 ຕ້ອງຢູ່ໃນລະດັບດີ 20-29 ຄະແນນ

2.3 ຕຳແໜ່ງຮອງສາດສະດາຈານ: ການພິຈາລະນາຜ່ານທີ່ຄະແນນ 110 ຄະແນນ

1. ເອກະສານປະກອບການສອນ ຕ້ອງຢູ່ໃນລະດັບດີ 15-20 ຄະແນນ
2. ເອກະສານຄຳບັນລະຍາຍການສອນ ຕ້ອງຢູ່ໃນລະດັບດີ 15-20 ຄະແນນ
3. ການແຕ່ງ, ຮຽບຮຽງ ແປຕຳລາ ຫຼື ຂຽນບົດຄວາມທາງວິຊາການ ຕ້ອງຢູ່ໃນລະດັບດີ 30-59 ຄະແນນ
4. ບົດຄົ້ນຄ້ວາວິທະຍາສາດ ຕ້ອງຢູ່ໃນລະດັບດີ 30-59 ຄະແນນ ຕໍ່ເຫຼັ້ມ (ບົດ)
5. ຜົນງານທາງວິຊາການໃນລັກສະນະອື່ນໆທີ່ມີຄຸນຄ່າທຽບໄດ້ກັບຂໍ້ 3 ແລະ 4 ຕ້ອງຢູ່ໃນລະດັບດີ 30-59 ຄະແນນ ຕໍ່ຫົວຂໍ້

2.4 ຕຳແໜ່ງສາດສະດາຈານ: ການພິຈາລະນາຜ່ານທີ່ຄະແນນ 140 ຄະແນນ

1. ການແຕ່ງ, ຮຽບຮຽງ ແປຕຳລາ ຫຼື ຂຽນບົດຄວາມທາງວິຊາການ ຕ້ອງຢູ່ໃນລະດັບດີເດັ່ນ 60-100 ຄະແນນ ຫຼື ຂຽນບົດຄວາມທາງວິຊາການ ຕ້ອງຢູ່ໃນລະດັບດີຫຼາຍ 30-59 ຄະແນນ/ເຫຼັ້ມ
2. ບົດຄົ້ນຄ້ວາວິທະຍາສາດ ຕ້ອງຢູ່ໃນລະດັບດີຫຼາຍ 30-59 ຄະແນນ ຕໍ່ເຫຼັ້ມ (ບົດ)
3. ຜົນງານທາງວິຊາການໃນລັກສະນະອື່ນໆທີ່ມີຄຸນຄ່າທຽບໄດ້ກັບຂໍ້ 1 ແລະ 2 ຕ້ອງຢູ່ໃນລະດັບດີ ຫຼື ດີເດັ່ນ